ສຳນັກງານໃຫຍ່

ເລກທີ: 209 /ທຄຕລ .....2021.....
ນະຄອນຫຼວງວຽງຈັນ, ວັນທີ: .....27 APR 2021.....

ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ນັບຖື.

ເລື່ອງ: ໃຫ້ຜູ້ຖືຮຸ້ນ ທຄຕລ ມອບສັນທະ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບ ດ້ານ ເພື່ອຕ້ານພະຍາດໂຄວິດ 19 (COVID-19), ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0016/ສຄຄຊ, ລົງວັນທີ 26 ເມສາ 2021;
- ອີງຕາມໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021 ລົງວັນທີ 20 ເມສາ 2021.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງຜູ້ຖືຮຸ້ນ ທຄຕລ ກ່ຽວກັບການເຂົ້າຮ່ວມ ກອງ ປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020. ໂດຍອີງໃສ່ສະພາບການແຜ່ລະບາດຂອງພະຍາດ COVID-19 ໃນປະຈຸບັນ, ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດ COVID-19 ຮັບປະກັນດ້ານສຸຂະ ພາບ ແລະ ຄວາມປອດໄພຂອງຜູ້ເຂົ້າຮ່ວມກອງປະຊຸມ, ດັ່ງນັ້ນ, ຈຶ່ງແຈ້ງມາຍັງຜູ້ຖືຮຸ້ນ ທຄຕລ ທີ່ມີສິດເຂົ້າຮ່ວມກອງປະຊຸມສາມັນ ຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020 ມອບສັນທະໃຫ້ສະມາຊິກສະພາບໍລິຫານອິດສະລະທ່ານໃດໜຶ່ງເປັນຜູ້ຕາງເຂົ້າຮ່ວມປະ ຊຸມແທນ ໂດຍປະກອບແບບຟອມໃບມອບສັນທະ ແລ້ວສົ່ງໃຫ້ ທຄຕລ ທາງອີເມວ: bcelhqv@bcel.com.la ຫຼື ນຳສົ່ງເປັນເອກະສານມາທີ່ສຳນັກງານໃຫຍ່ ທຄຕລ ກ່ອນວັນທີ 30 ເມສາ 2021. (ລາຍລະອຽດໜັງສືເຊີນ ແລະ ໃບມອບສັນທະ ທ່ານສາມາດດາວໂຫລດໄດ້ທີ່ ເວັບໄຊຂອງ ທຄຕລ www.bcel.com.la ແລະ ເວັບໄຊ ເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ www.lsxdisclosure.com.la)

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ຜູ້ອຳນວຍການໃຫຍ່
ທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ

❖ **ຜູ້ປະສານງານຝ່າຍ ທຄຕລ**

1) ທ່ານ ນາງ ພອນດາສຸກ ວົງພະຈັນ, ໂທ: 020 92 636 456
2) ທ່ານ ພອນນະລັດ ກອງວົງສາ, ໂທ: 020 2222 3455

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA